ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

老挝人民民主共和国

和平　独立　民主　统一　繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 101 /ບລຈ

编号：101 /老-中证券

ນະຄອນຫຼວງວຽງຈັນ, ວັນທີ 13 ເມສາ 2026

首都万象市，日期：2026 年 4 月 13 日

ໜັງສືແຈ້ງເຊີນ

邀请函

ຮຽນ: ທ່ານຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ທີ່ນັບຖື

致：尊敬的老-中证券公众公司各位股东

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025.

主题：邀请参加老-中证券 2025 年度股东会

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ I ປະຈຳປີ 2026, ສະບັບເລກທີ 067/ບລຈ, ລົງວັນທີ 27 ມີນາ 2026.
- 根据 2026 年 3 月 27 日老签署的《2026 年第一次董事会会议决议》（[老中证券]第 067 号）。
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ II ປະຈຳປີ 2026, ສະບັບເລກທີ 092/ບລຈ, ລົງວັນທີ 8 ເມສາ 2026.
- 根据 2026 年 4 月 8 日老签署的《2026 年第二次董事会会议决议》（[老中证券]第 092 号）。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຂໍຖືເປັນກຽດຢ່າງສູງຮຽນເຊີນທ່ານຜູ້ຖືຮຸ້ນ ບລຈ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025 ໃນວັນພຸດ ທີ 29 ເມສາ 2026 ເວລາ 9:00 ໂມງ ເປັນຕົ້ນໄປ (ເລີ່ມລົງທະບຽນເວລາ 8:30 ໂມງ) ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

老-中证券公众公司（以下简称“老-中证券”）诚邀各位股东出席老-中证券 2025 年度股东会。会议将于 2026 年 4 月 29 日（星期三）北京时间 10:00 举行，签到时间为北京时间 09:30，地点位于老挝首都万象市赛色塔县彭覃村老挝证券交易所大楼 8 楼大会议室，届时将审议各项议案。

ນອກຈາກນີ້ ບລຈ ຍັງໄດ້ແຈ້ງວາລະກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025, ເອກະສານຄັດຕິດເພື່ອໃຊ້ໃນການພິຈາລະນາ ແລະ ລົງຄະແນນສຽງທັງໝົດນັ້ນ ໄດ້ຖືກເຜີຍແຜ່ໂດຍ ບລຈ ຜ່ານເວັບໄຊຂອງ ບລຈ (www.lcs.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la) ລວມທັງກຳນົດເອົາວັນທີ 7 ເມສາ 2026 ເປັນມື້ປິດປຶ້ມບັນຊີຫະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025 ແລະ ກຳນົດເອົາວັນທີ 24 ເມສາ 2026 ເປັນມື້ປິດປຶ້ມບັນຊີຫະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດການຮັບເງິນປັນຜົນ ເຊິ່ງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

此外，老-中证券已通过老-中证券公众公司网站（http://www.lcs.com.la）以及老挝证券交易所信息系统（www.lsx.com.la）公布了 2025 年度股东会的议程及所有供审议和表决的附件。同时，已确定股权登记日为 2026 年 4 月 7 日（确认有权出席本次股东会的股东资格）及 4 月 24 日（确认分红资格），相关信息均已完整披露。

ຫວັງຢ່າງຍິ່ງວ່າ ທ່ານຄົງສະລະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

我们殷切期望您能拨冗出席本次会议。

ເຊັນແທນປະທານສະພາບໍລິຫານ

代签 董事长

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ປອ ສຸດທິເດດ ບຸນລືໄຊ

ທ່ານ ປອ. ສຸດທິເດດ ບຸນລືໄຊ

苏提德·布鲁赛 博士

ເອກະສານຄັດຕິດ ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025

1. ເອກະສານຄັດຕິດ 1: ວາລະກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025;
2. ເອກະສານຄັດຕິດ 2: ວາລະທີ 1 ລາຍງານບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະໄໝສາມັນ ປະຈຳປີ 2024;
3. ເອກະສານຄັດຕິດ 3: ວາລະ 2 ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2026 ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ;
4. ເອກະສານຄັດຕິດ 4: ວາລະທີ 3 ພິຈາລະນາ ແລະ ຮັບຮອງ ວ່າຈ້າງ ບໍລິສັດ ເອີນແອນຢັ້ງລາວ ຈຳກັດ ເປັນ ຜູ້ກວດສອບບັນຊີພາຍນອກຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ;
5. ເອກະສານຄັດຕິດ 5: ວາລະທີ 4 ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2025 ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ;
6. ເອກະສານຄັດຕິດ 6: ວາລະທີ 5 ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2025 ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ;
7. ເອກະສານຄັດຕິດ 7: ວາລະທີ 6 ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນອຸດໜູນ ໃຫ້ສະມາຊິກສະພາ ບໍລິຫານ ແລະ ເງິນເດືອນຕາມຜົນງານໃຫ້ພະນັກງານ ບລຈ;
8. ເອກະສານຄັດຕິດ 8: ວາລະທີ 7 ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານ ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ;
9. ເອກະສານຄັດຕິດ 9: ໃບມອບສິດ ແລະ ຊີວະປະຫວັດຂອງສະມາຊິກອິດສະລະ;
10. ເອກະສານຄັດຕິດ 10: ຄຳແນະນຳກ່ຽວກັບການລົງຄະແນນສຽງ;
11. ເອກະສານຄັດຕິດ 11: ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳສະເໜີໂຕເພື່ອເຂົ້າຮ່ວມກອງ ປະຊຸມ;
12. ເອກະສານຄັດຕິດ 12: ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025.

老-中证券 2025 年度股东大会附件

1. 附件 1：老-中证券 2025 年度股东会会议议程；
2. 附件 2：议案一 通报老-中证券公众公司 2024 年度股东会的会议纪要；
3. 附件 3：议案二 审议老-中证券公众公司 2025 年度工作报告暨 2026 年度经营计划；
4. 附件 4：议案三 审议聘请安永老挝有限公司担任老-中证券公众公司审计机构；
5. 附件 5：议案四 审议《老-中证券公众公司 2025 年度审计报告》；
6. 附件 6：议案五 审议老-中证券公众公司 2025 年度分红方案；
7. 附件 7：议案六 审议发放老-中证券董事会薪酬及员工绩效工资方案；
8. 附件 8：议案七 审议老-中证券公众公司员工奖励方案；
9. 附件 9：授权委托书和独立董事简历；

10. 附件 10：表决说明；
11. 附件 11：出席会议所需文件及身份证明指引；
12. 附件 12：老-中证券 2025 年度股东大会会议地点地图。

ໝາຍເຫດ:

备注：

1. ຜູ້ຖືຮຸ້ນທຸກທ່ານສາມາດດາວໂຫຼດເອົາໜັງສືແຈ້ງເຊີນ ພ້ອມເອກະສານຄັດຕິດໄດ້ທີ່ເວັບໄຊຂອງຕະຫຼາດຫຼັກຊັບ http://www.lsx.com.la ຫຼື ຈະໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4, ພະແນກຊໍາລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: +85621 454361-4 ເລີ່ມແຕ່ວັນທີ 13 ເມສາ 2026 ເປັນຕົ້ນໄປ.

   所有股东均可登录老挝证券交易所网站（http://www.lsx.com.la）下载邀请函及相关附件。此外，自 2026 年 4 月 13 日起，股东也可前往老挝证券交易所大楼 4 楼证券结算托管部领取会议邀请函（地址：首都万象市赛色塔县 T4 路彭覃村，电话：+85621 454361-4）。

2. ສໍາລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານໍາບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືຜ່ານແດນ (ສໍາລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ.

   若股东亲自出席会议，请于会议当天携带本人身份证、户口本或护照（外国股东适用）以便签到登记时出示。

3. ສໍາລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ພ້ອມລົງລາຍເຊັນໃນໃບມອບສິນຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

   如股东委托代表出席会议并代为表决，请按要求正确、完整填写随附的授权委托书并签字。

ຜູ້ປະສານງານຂອງ ບລຈ:

老-中证券联系人：

1. ທ່ານ ນາງ ຈັນພະພອນ ສີຫາລາດ, ໂທ: 020 5599 5868

   占帕蓬·西哈拉女士，电话：020 5599 5868

ວາລະ

ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2025

老-中证券公众公司

2025 年度股东会议程

ເວລາປະຊຸມ: ວັນທີ 29 ເມສາ 2026 ເວລາ 9:00-11:00

会议时间：2026 年 4 月 29 日，北京时间 10:00-12:00

ຮູບແບບກອງປະຊຸມ: ປະຊຸມເຊິ່ງໜ້າ ແລະ ປະຊຸມອອນລາຍ

会议组织形式：线下会议结合线上会议

ຜູ້ຮຽກປະຊຸມ: ທ່ານ ໜູໄຊ ພູມສຸວັນ ປະທານສະພາບໍລິຫານ ບລຈ

会议召集：努赛·普苏万 董事长

ປະທານກອງປະຊຸມ: ທ່ານ ໜູໄຊ ພູມສຸວັນ

会议主席：努赛·普苏万

ຜູ້ເຂົ້າຮ່ວມປະຊຸມ: ຜູ້ຖືຮຸ້ນທັ້ງໝົດ ຂອງ ບລຈ

参会人员：老-中证券全体股东

ວາລະ

ກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະໄໝສາມັນ ປະຈຳປີ 2025

老-中证券公众公司

2025 年度股东会议案

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະໄໝ ສາມັນ ປະຈຳປີ 2024.

议案一：通报老-中证券公众公司 2024 年度股东会的会议记录;

ບລຈ ໄດ້ມີບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ຂອງ ບລຈ ສະໄໝສາມັນ ປະຈຳປີ 2024 ຈັດຂຶ້ນໃນວັນທີ 12 ກັນຍາ 2025 ຕາມລາຍລະອຽດທີ່ຢູ່ໃນ (ເອກະສານຄັດຕິດ 2) ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງ ກັບກົດລະບຽບທີ່ກ່ຽວຂ້ອງແລ້ວ.

老一中证券公众公司已于 2025 年 9 月 12 日召开了 2024 年度股东大会，并形成了会议记录，具体内容详见《附件二》。上述会议记录已按照相关法律法规及规章制度的要求，依法依规予以公开披露。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວເຫັນວ່າ ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议认为，上述股东会会议记录内容真实、准确、完整，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ວາລະທີ 02: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2026 ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອກະສານຄັດຕິດ 03).

议案二：审议老-中证券公众公司2025年度工作报告暨2026年度经营计划（详见附件03）。

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2026, ໂດຍມີລາຍລະອຽດກັ່ງລຸ່ມນີ້:

提请股东会审议老-中证券公众公司 2025 年度工作报告暨 2026 年度经营计划，具体如下：

ຜົນການດຳເນີນທຸລະກິດ ບລຈ ປະຈຳປີ 2025 ສາມາດສັງລວມໄດ້ດັ່ງລຸ່ມນີ້:

老-中证券2025年度主要工作情况主要内容概述如下：

1. **ວຽກງານການອອກຈຳໜ່າຍຮຸ້ນຄັ້ງທຳອິດຕໍ່ມວນຊົນ (IPO) ແລະ ເຂົ້າຈົດທະບຽນໃນ ຕລຊລ ຂອງ ບລຈ:**
   老-中证券的首次公开募股（IPO）和在老交所上市工作：

- ວັນທີ 13 ມັງກອນ 2025, ບລຈ ສະເໜີ ຂໍອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ.
  公司于 2025 年 1 月 13 日向证管委办公厅正式提交《首次公开发行股票申请》。
- ວັນທີ 17 ມີນາ ໄດ້ຮັບໃບອະນຸຍາດອອກຈາໜ່າຍຮຸ້ນຄັ້ງທາອິດຈາກ ສຄຄຊ.
  3 月 17 日获得证管委办公厅颁发的《首次公开发行股票许可证》。
- ວັນທີ 3 ເມສາ, ບລຈ ໄດ້ສຳເລັດການດຳເນີນການອອກຈາໜ່າຍອອກຈາໜ່າຍຮຸ້ນໃໝ່ ຈຳນວນ 111,111,200 ຮຸ້ນ, ມູນຄ່າກຳນົດ 100 ກີບ/ຮຸ້ນ, ລາຄາອອກຈຳໜ່າຍ 130 ກີບ/ຮຸ້ນ, ໄດ້ລະດົມທຶນລວມ 14,444,456,000 ກີບ.
  4 月 3 日公司顺利完成新股发行工作，共计发行 111,111,200 股，面值 100 基普/股（约合 0.032 元/股），公开发行价格 130 基普/股（约合 0.042 元/股），募集资金 14,444,456,000 基普（约合 465.95 万元）。
- ວັນທີ 22 ເມສາ ໄດ້ຮັບໃບອະນຸຍາດການຈົດທະບຽນຮຸ້ນຈາກ ຕລຊລ.
  于 4 月 22 日获得老交所《关于批准股票登记的批复》。
- ໃນວັນທີ 25 ເມສາ, ບລຈ ໄດ້ເຊັນສັນຍາຂຶ້ນທະບຽນຊື້ ຂາຍກັບ ຕລຊລ.
  4 月 25 日公司举行首个交易日庆典活动，与老交所签署上市协议。

2. **ວຽກງານທີ່ກ່ຽວຂ້ອງກັບກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິຫານ**
   董事会会议和股东会

- ສຳເລັດການຈັດກອງປະຊຸມສະພາບໍລິຫານຈຳນວນ 4 ຄັ້ງ ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2024, ພ້ອມທັງໄດ້ລາຍງານມະຕິກອງປະຊຸມຕໍ່ ສຄຄຊ ຢ່າງທັນເວລາ ແລະ ໄດ້ເຜີຍແຜ່ຂໍ້ມູນຕາມລະບຽບກຳນົດຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊລ.
  公司成功召开 4 次董事会会议和 2024 年度股东会，并将会议决议及时向证管委办公厅汇报并按规定在老交所网站进行了信息披露。

3. ສະພາບການດຳເນີນທຸລະກິດປະຈຳປີ:

年度经营情况：

- ບລຈ ມີຊັບສິນລວມປະມານ 237.56 ຕື້ກີບ, ຊັບສິນສຸດທິປະມານ 164.90 ຕື້ກີບ. ລາຍຮັບຈາກການດຳເນີນງານຕົວຈິງໃນໄລຍະການລາຍງານປະມານ 43.82 ຕື້ກີບ ແລະ ມີກຳໄລສຸດທິປະມານ 27.30 ຕື້ກີບ (ເນື້ອໃນລະອຽດແມ່ນໄດ້ຄັດຕິດໃນເອກະສານຊ້ອນທ້າຍ).

  公司总资产 2,375.56 亿基普（约合 7,663.11 万元），净资产 1,649.01 亿基普（约合 5,319.41 万元）。报告期内实现营业收入 438.24 亿基普（约合 1,413.67 万元），净利润 273.03 亿基普（约合 880.75 万元）（具体内容详见随附文件）。

4. ສະພາບພື້ນຖານຂອງບັນດາທຸລະກິດຫຼັກຂອງ ບລຈ ໃນປີ 2025 ມີດັ່ງນີ້:

2025 年公司各主营业务基本情况如下：

4.1. ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ

投行业务

- ປີ 2025 ສຳເລັດໂຄງການ IPO ຂອງທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ແລະ ໂຄງການອອກຮຸ້ນແກ່ຜູ້ຖືຮຸ້ນເດີມ ແລະ ການອອກຈຳໜ່າຍຮຸ້ນຕໍ່ມວນຊົນ ຂອງ ທຄຕລ ສາມາດສ້າງລາຍຮັບຈາກການດຳເນີນງານ ຈຳນວນ 22,419,612,630 ກີບ.

  2025 年公司公司作为主财务顾问和和主承销商，完成了联合开发银行（JDB）的 IPO 和在老交所上市项目和外贸银行配股和公开发行股票项目，实现营业收入 22,419,612,630 基普（约合 723.21 万元）。

- ໃຫ້ບໍລິການທີ່ປຶກສາ ໃນການອອກຈຳໜ່ວຍຮຸ້ນ IPO ໃຫ້ກັບ ກັບ ທະນາຄານ ບີໄອຊີ (BIC), ບໍລິສັດ ຍອດງຶ່ມ ພາວເວີ ຈຳກັດ ແລະ ທະນາຄານລາວ–ຈີນ.

  分别与商业和投资银行（BIC）、略乌电力有限公司签署首次公开募股（IPO）财务顾问协议。

- ຮ່ວມມືກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ບໍລິສັດຫຼັກຊັບ ແອລ์ดีบี ຈຳກັດຜູ້ດຽວ ແລະ ບໍລິສັດ LOCA ຈຳກັດ ໃນການລົງນາມສັນຍາການບໍລິການທີ່ປຶກສາດ້ານການເງິນ.

  联合外贸-恭泰证券、老挝开发银行证券与 LOCA 有限公司签署绿色债发行财务顾问。

4.2.ວຽກງານ ຄ้าຫຼັກຊັບ

自营业务

- ໃນປີ 2025 ວຽກງານຄ้าຫຼັກຊັບມີກຳໄລຈາກການດັດແປງມູນຄ่ายุดติทำ ຢู่ທີ່ 12,922,927,650 ກີบ.

  2025 年自营业务因公允价值变动实现收益 12,922,927,650 基普（约合 416.87 万元）。

4.3.ວຽກງານ ນายໜ้าซื้ ขายหຼักชับ

经纪业务

- ໃນປີ 2025, ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ ຂອງບໍລິສັດໄດ້ມີລາຍຮັບຕົວຈິງ 10,598,346,560 ກີບ. ໃນນັ້ນ, ລາຍຮັບວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ 102,262,352 ກີບ ແລະ ລາຍຮັບວຽກງານຕົວແທນຈຳໜ່າຍພັນທະບັດລັດຖະບານ 10,496,084,208 ກີບ.
  2025 年公司实现经纪业务收入 10,598,346,560 基普（约合 341.88 万元）。其中，证券经纪业务收入 102,262,352 基普（约合 3.30 万元），国债代销业务收入 10,496,084,208 基普（约合 338.58 万元）。

4.4.ວຽກງານ ບໍລິຫານກອງທຶນ
私募基金管理业务

- ພະນັກງານຂອງບໍລິສັດຈຳນວນ 5 ຄົນ ໄດ້ຜ່ານການສອບເສັງຮັບຮອງຄຸນສົມບັດຜູ້ປະກອບວິຊາຊີບກອງທຶນ ທີ່ຈັດໂດຍ ຕລຊລ.
  公司 5 名员工通过了老交所组织的基金从业人员资格考试。

5. ວຽກງານບຸກຄະລາກອນ
人力工作

- ສຳເລັດການສົ່ງມອບວຽກລະຫວ່າງພະນັກງານຜູ້ເກົ່າ ແລະ ຜູ້ໃໝ່ ຂອງພະແນກບັນຊີ-ການເງິນ, ພະແນກການຄ້າຫຼັກຊັບ ແລະ ຜູ້ຮັບຜິດຊອບວຽກງານກອງເລຂານຸການ.
  完成了财务部门、自营业务部门、秘书处负责人的新老交接工作。
- ເຂົ້າຮ່ວມການຝຶກອົບຮົມດ້ານການເຜີຍແຜ່ຂໍ້ມູນຕາມມາດຕະຖານບັນຊີສາກົນ ແລະ ການຝຶກອົບຮົມຫົວຂໍ້ສະເພາະທີ່ກ່ຽວກັບລາຍງານການເງິນ.
  参加了国际会计通用准则信息披露培训及财务报告相关专题培训。
- ໄດ້ດຳເນີນການສຳພາດພະນັກງານ ແລະ ຈັດຝຶກງານຢ່າງເປັນລະບຽບ ເພື່ອເພີ່ມພະນັກງານໃໝ່ໃຫ້ແກ່ພະແນກທີ່ບໍ່ກາສາທາງດ້ານການເງິນ ແລະ ພະແນກບັນຊີ-ການເງິນ.
  有序开展了员工面试和实习工作，为投行及财务部门补充了新员工。

6. ການພັດທະນາລະບົບຊື້ຂາຍຫຼັກຊັບຜ່ານໂທລະສັບມືຖື
手机证券交易系统开发

- ຮ່ວມກັບ ບໍລິສັດ HITHINK INTERNATIONAL (SINGAPORE) PTE. LTD ແລະ ບໍລິສັດຫຼັກຊັບ ແອລ໌ດີບີ ລາຍງານຄວາມຄືບໜ້າການພັດທະນາລະບົບຊື້ ຂາຍຫຼັກຊັບຜ່ານໂທລະສັບມືຖື.
  与核新国际、老挝开发银行证券共同汇报手机证券交易系统开发进展。
- ປະສານງານກັບ ຕລຊລ ໃນການດຳເນີນການກວດກາຫ້ອງເຊີເວີ ແລະ ລະບົບເຕັກໂນໂລຊີຂໍ້ມູນ ໃຫ້ສຳເລັດ ພ້ອມທັງໄດ້ດຳເນີນການແປພາສາເມນູໃນລະບົບຝັ່ງຜູ້ໃຊ້ບໍລິການ.
  配合老交所完成了机房及信息技术系统检查，并完成了客户端菜单翻译工作。
- ຕິດຕັ້ງ ແລະ ນຳໃຊ້ລະບົບຝັ່ງເຊີເວີ ພ້ອມທັງໄດ້ດຳເນີນການຂໍເປີດບັນຊີນັກພັດທະນາແອັບພລິເຄຊັ່ນ.
  完成了服务器端部署，并申请了应用商店开发者账号。

7. ການຮ່ວມມືກັບພາຍນອກ
对外合作

- ຕິດຕາມຄະນະ ສຄຄຊ ເຂົ້າເຂົ້າຢ້ຽມຢາມ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປ.ຈີນ.
  陪同证管委办公厅访问中国证监会。
- ຕິດຕາມຄະນະ ຕລຊລ ເຂົ້າຢ້ຽມຢາມຕະຫຼາດຫຼັກຊັບເຊີນເຈີ້ນ ແລະ ໄດ້ເຂົ້າຮ່ວມພິທີຕ່ໍອາຍຸບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງຕະຫຼາດຫຼັກຊັບເຊີນເຈີ້ນ ແລະ ຕລຊລ.
  陪同老交所访问深交所，并参与了深交所与老交所的谅解备忘录续签仪式。
- ເຂົ້າຮ່ວມການຝຶກອົບຮົມ ແລະ ງານກິດຈະກຳຕ່າງໆຂອງຕະຫຼາດທຶນ ແລະ ສຄຄຊ.
  参加证管委办公厅及老交所组织的各类培顺和相关活动。

ແຜນການດຳເນີນທຸລະກິດ ບລຈ ປະຈຳປີ 2026 ສາມາດສັງລວມໄດ້ດັ່ງລຸ່ມນີ້:

老一中证券 2026 年度经营计划主要内容概述如下：

1. ວຽກງານການບໍລິຫານ ແລະ ການຈ່າຍເງິນປັນຜົນ

公司治理与分红

- ມີແຜນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ໃນເດືອນເມສາ 2026, ເພື່ອພິຈາລະນາຮອງຮັບ ແລະ ກຳນົດແຜນການຈ່າຍເງິນປັນຜົນປະຈຳປີ ແລະ ດຳເນີນການຈ່າຍເງິນປັນຜົນໃຫ້ສຳເລັດ.
  计划于 2026 年 4 月召开 董事会会议和 2025 年度股东会，审议并确定年度分红方案，完成分红工作。

2. ແຜນການນຳໃຊ້ເງິນທຶນທີ່ລະດົມໄດ້

募集资金使用规划

- ຈັດປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ວິສາມັນ ໃນເວລາທີ່ເໝາະສົມ ເພື່ອພິຈາລະນາວ່າ ເງິນທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນຄັ້ງທຳອິດຕ່ໍມວນຊົນ (IPO) ຈະຖືກນຳໄປໃຊ້ຕາມແຜນການໃນການຈັດຕັ້ງບໍລິສັດບໍລິຫານກອງທຶນ ຫຼື ຈະມີການປ່ຽນແປງຈຸດປະສົງການນຳໃຊ້ເງິນທຶນເພື່ອເສີມສ້າງສະພາບຄ່ອງຂອງບໍລິສັດ.
  适时召开董事会会议和临时股东会，审议首次公开募股（IPO）募集资金是否按计划设立投资基金管理公司，或变更募集资金用途以补充公司流动性。

3. ການນຳລະບົບຊື້ຂາຍຫຼັກຊັບຜ່ານໂທລະສັບມືຖືເຂົ້ານຳໃຊ້

手机证券交易系统上线

- ຈະພະຍາຍາມດຳເນີນການພັດທະນາ ແລະ ທົດສອບລະບົບຊື້ ຂາຍຫຼັກຊັບຜ່ານໂທລະສັບມືຖືໃຫ້ສຳເລັດໂດຍໄວ ເພື່ອໃຫ້ໄດ້ນຳໃຊ້ງານໂດຍໄວ ເພື່ອຍົກສູງການບໍລິການລູກຄ້າໃຫ້ດີຍິ່ງຂຶ້ນ.
  力争尽快完成手机证券交易系统的开发和测试工作，争取早日投入使用，提升客户服务体验。

4. ການຄົ້ນຄ້ວາດ້ານທຸລະກິດ ແລະ ຜະລິດຕະພັນ

业务与产品创新探索

- ບລຈ จะร่วมถ้ินถอ้าถอามเป้ินไปได้ในการสึกสาถอามเป้ินไปได้สำลับการออกจำหม่าย ผะลิดตะพันใบยั้งยืนการฝากธับหุ้กชับ.
  老一中证券拟开展有关发行存托凭证产品的可行性研究工作。

5. เสิมส้างถอามเข้ิมแขงการบໍลิการที่ปึกสาด้านการเงิน และ การชุกยู้โถงการ
投行业务强化与项目推进

- บลจ จะจัดสันเพิ่มจำนอนพะนักงานใช้มิถอาม เหมาะสิม. โดยเน้ินใส่การธับปะกันการดำเนิน องกงานที่ปึกสาทางด้านการเงินสำลับโถงการ IPO ของทะนาถาน เพื่อการลิงทึน และ การค้า (BIC), บໍลิสัด ยอดงิ่ม พาอเอิ จำกัด, ลอมทังโถงการออกพันทะบัดสิขงอของบໍลิสัด LOCA, โดยธับผ้าที่เป้ันที่ปึกสาธ่อม และ ติอแทนจำหม่าย.
  合理增加投行业务人员配置。重点保障商业和投资银行（BIC）、略乌电力有限公司 IPO 财务顾问业务，以及 LOCA 网约车公司绿色债发行联合财务顾问和代销工作。
- สืบต่ำถิดตาม โถงการที่ปึกสาทางด้านการเงินสำลับโถงการ IPO ของทะนาถานลาอ–จีน.
  继续跟进老-中银行 IPO 财务顾问项目。
- ชุกยู้การดำเนินการตามสันยาโอนธุ้นของ กุ่มบໍลิสัดอัดทะนะทำ–ท่องท่งอลาอ มะหาชิน เพื่อให้สามาดธับเงินถ่าโอนธุ้น และ ดำเนินการโอนธุ้นให้สำเล็ดพายในไตมาด 2 ปี 2026.
  推动老挝文旅集团股权转让协议落实，争取在 2026 年 2 季度完成股权转让资金的实收和转股工作。

ถำเห้นของสะพาบໍลิหาน:

董事会意见：

สะพาบໍลิหานได้พิจาละนาแล้อ และ เห้นดิให้กองปะชุมผู้ถือธุ้นพิจาละนา และ ธับธองเอิา.

董事会经审议后，同意提交股东会审议。

ถะแนนสงงที่ต้องใช้:

表决方式及通过条件：

อาละนี้จะถือว่าถือกธับธองเอิา เมื่อมิถะแนนสงงเห้นดิงายกว่าเถิ่งหนึ่งของจำนอนสงงที่เข้าธ่อมกองปะชุม.

本议案在出席股东会的股东所持表决权中，经超过半数同意即视为通过。

ວາລະທີ 03: ພິຈາລະນາ ແລະ ຮັບຮອງ ວ່າຈ້າງ ບໍລິສັດ ເອີນແອນຢັ້ງລາວ ຈຳກັດ ເປັນຜູ້ກວດສອບບັນຊີພາຍນອກຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອກະສານຄັດຕິດ 04).

议案三：审议聘请安永老挝有限公司担任老-中证券公众公司审计机构（详见附件 04）。

ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ວ່າຈ້າງ ບໍລິສັດ EY ບົນພື້ນຖານສຳເລັດບົດລາຍງານ ການກວດສອບບັນຊີ ບລຈ ປະຈຳປີ 2025 ແລ້ວ ສືບຕໍ່ເປັນຜູ້ກວດສອບບັນຊີພາຍນອກ ປະຈຳປີ 2026 ຂອງ ບລຈ. ໂດຍໄດ້ກຳນົດຄ່າບໍລິການກວດສອບສຳລັບປີ 2026 ຄືກັນກັບ ປີ 2025 ໃນມູນຄ່າ 11,000 ໂດລາ/ປີ.

提请股东大会审议聘请 EY 在完成好老-中证券 2025 年度审计报告的基础上，继续担任老-中证券 2026 年度审计机构，2026 年度审计服务费与 2025 年保持一致，金额为 11,000 美元/年。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ວາລະທີ 04: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2025 ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອກະສານຄັດຕິດ 05).

议案四：审议《老-中证券公众公司 2025 年度审计报告》（附件 05）。

ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດລາຍງານຖານະການເງິນ ປະຈຳປີ 2025 ຂອງ ບລຈ, ເຊິ່ງໄດ້ຜ່ານການກວດສອບຈາກ ບໍລິສັດ EY ເນື້ອໃນລະອຽດແມ່ນສາມາດກວດເບິ່ງໃນ **ເອກະສານຄັດຕິດ 05**.

提请股东大会审议老一中证券 2025 年度财务报告。该报告已由安永老挝（EY）完成审计，具体内容详见《附件 05》。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ວາລະທີ 05: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປະຈຳປີ 2025 ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອກະສານຄັດຕິດ 06).

议案五：审议老-中证券公众公司 2025 年度分红方案（附件 06）。

ສະເໜີ ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງແຜນຈ່າຍເງິນປັນຜົນຂອງ ບລຈ ປະຈຳປີ 2025, ດັ່ງລຸ່ມນີ້:

1. ຈ່າຍເງິນປັນຜົນດ້ວຍຮູບແບບເງິນສົດ 14 ກີບ/ຮຸ້ນ.
2. ຈຳນວນເງິນປັນຜົນທັງໝົດ: 15,555,556,800 ກີບ.
3. ມື້ຈ່າຍເງິນປັນຜົນ: 15 ພຶດສະພາ 2026.

特提请股东会审议老-中证券 2025 年度分红方案，细节如下：

1、以现金方式分红 14 基普/股（约合 0.005 元/股）。
2、分红金额：15,555,556,800 基普（约合 501.79 万元）。
3、分红派息日：2026 年 5 月 15 日。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ອາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ອາລະທີ 06: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນອຸດໜູນ ໃຫ້ສະມາຊິກສະພາບໍລິຫານ ແລະ ເງິນເດືອນຕາມຜົນງານໃຫ້ພະນັກງານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອກະສານຄັດຕິດ 07).

议案六：审议发放老-中证券公众公司董事会薪酬及员工绩效工资方案（附件 07）。

ສະເໜີມາຍັງ ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ການເບີກຈ່າຍເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ແລະ ເງິນເດືອນຕາມຜົນງານໃຫ້ພະນັກງານ, ເຊິ່ງມີລາຍລະອຽດດັ່ງນີ້:

1. ເຫັນດີເບີກຈ່າຍເງິນອຸດໜູນໃຫ້ສະພາບໍລິຫານຄື:
   1) ປະທານສະພາ 35,000,000 ກີບ;
   2) ຮອງປະທານສະພາ 30,000,000 ກີບ;
   3) ສະມາຊິກສະພາບໍລິຫານ (6 ທ່ານ) : 25,000,000 ກີບ/ທ່ານ

ໝາຍເຫດ: ຍ້ອນຜູ້ອຳນວຍການ ເປັນສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານແມ່ນເອົາສ່ວນໂບນັດຂອງຄະນະອຳນວຍການ ແລະ ພະນັກງານ ບລຈ ປະຈຳປີ 2025 ແທນ ແລະ ບໍ່ໄດ້ຮັບເງິນອຸດໜູນຊ້ຳອີກໃນສ່ວນຂອງສະພາບໍລິຫານ;

2. ເຫັນດີເບີກຈ່າຍເງິນເດືອນຕາມຜົນງານໃຫ້ພະນັກງານຄື: ຄິດໄລ່ 50% ຂອງເງິນເດືອນພື້ນຖານກ່ອນປັບຖານເງິນເດືອນໃນປີ 2025, ເປັນຈຳນວນເງິນລວມທັງໝົດ 1,065,360,000 ກີບ.

提请股东会审议向董事会成员发放津贴及向员工发放绩效工资，，具体内容如下：

1. 同意发放董事会津贴，细节如下：
   1) 董事长：35,000,000 基普(约合 11,290.32 元)
   2) 副董事长：30,000,000 基普(约合 9,677.42 元)
   3) 董事 （6 名）：25,000,000 基普(约合 8,064.52 元)/人

注：总经理兼执行董事参与公司管理层激励体系，将领取 2025 年管理层奖金，不再参与领取董事津贴；

2. 同意向员工发放绩效工资：按 2025 年调薪前的基础工资的 50% 计算，总金额为 1,065,360,000 基普（约合 34.36 万元）。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ວາລະທີ 07: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອກະສານຄັດຕິດ 08).

议案七：审议老-中证券公众公司员工奖励方案（附件 08）。

ສະເໜີ ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງແຜນການໃຫ້ໂບນັດພະນັກງານ, ເຊິ່ງມີລາຍລະອຽດຄືດັ່ງນີ້:

1. ໂບນັດສຳລັບຄະນະອຳນວຍການ : 1,200,000,000 ກີບ;
2. ໂບນັດສຳລັບພະນັກງານທັງໝົດສ່ວນທີ່ເຫຼືອ 1,530,339,211 ກີບ, ໂດຍຄະນະອຳນວຍການຈະດຳເນີນການຈັດສັນ ໂດຍເບິ່ງຕາມຜົນງານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແລະ ປະລິມານວຽກໂດຍລວມຂອງແຕ່ລະບຸກຄົນເປັນຕົວກຳນົດ.

提请股东会审议公司员工奖励方案，具体分配奖励方案如下：

1. 管理层奖励 1,200,000,000 基普（约合 38.71 万元）
2. 剩余全体员工奖励 1,530,339,211 基普（约合 49.36 万元），由管理层根据个人业绩贡献和工作量综合评定后进行合理分配。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
老挝人民民主共和国
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
和平 独立 民主 统一 繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 006 /ບລຈ
编号：006 /LCS
ນະຄອນຫຼວງວຽງຈັນ, ວັນທີ 12 ກັນຍາ 2025
2025 年 9 月 12 日，首都万象

ບົດບັນທຶກ
ກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
ສະໄໝສາມັນ ປະຈຳປີ 2024
老-中证券公众公司
2024 年度股东大会
会议纪要

ກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ສະໄໝສາມັນ ປະຈຳປີ 2024, ໄດ້ຈັດຂຶ້ນໃນວັນທີ 5 ກັນຍາ 2025 ເວລາ 9:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ພາຍໃຕ້ການເປັນປະທານກອງປະຊຸມຜູ້ຖືຮຸ້ນໂດຍ **ທ່ານ ໝູ່ໄຊ ພູມສຸວັນ ປະທານສະພາບໍລິຫານ ບລຈ** ພ້ອມດ້ວຍສະມາຊິກສະພາບໍລິຫານ ບລຈ. ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 41 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 17 ທ່ານ, ຖືຮຸ້ນລວມ 1,083,234,900 ຮຸ້ນ ຄິດເປັນ 97.49% ຂອງຈຳນວນຮຸ້ນທັງໝົດຂອງ ບລຈ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ກົດລະບຽບຂອງ ບລຈ. ທ່ານປະທານ ຈຶ່ງໄດ້ເປີດກອງປະຊຸມຢ່າງເປັນທາງການ ແລະ ໄດ້ມອບໝາຍໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານ ທີ່ເຂົ້າຮ่วมกองประชุม ซึ่งมีลายละอียดดังนี้:

老-中证券公众公司（简称“老-中证券”）于 2025 年 9 月 5 日北京时间 10:00，在老挝万象市赛色塔县蓬覃村的老挝证券交易所（老交所）大楼 8 楼大会议室召开了 2024 年度股东大会。会议由老-中证券董事长努赛·普苏万先生主持，公司各位董事出席会议。本人亲自出席会议的股东共 41 名，17 名股东授权代表参会。参会股东合计持有股份 1,083,234,900 股，占公司总股本的 97.49%，符合相关法律法规及公司章程关于参会人数的规定。董事长宣布召开大会并交由主持人介绍出席会议的董事，具体如下：

ຜູ້ເຂົ້າຮ่วม:
参会董事

- **ສະມາຊິກສະພາບໍລິຫານ ທີ່ເຂົ້າຮ่วมกองประชุม:**
  现场参会的董事

1. ທ່ານ ໜູໄຊ ພູມສຸວັນ ປະທານສະພາບໍລິຫານ ບລຈ, ເຮັດໜ້າທີ່ເປັນປະທານກອງປະຊຸມຜູ້ຖືຮຸ້ນ;
   老-中证券董事长 努赛·普苏万 担任股东大会主席;
2. ທ່ານ ສົມພິງ ບໍລິບຸດ ສະມາຊິກສະພາບໍລິຫານ;
   董事 颂蓬·波里布
3. ທ່ານ ລິນ ລີ (MR LI LIN) ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ ບລຈ;
   董事兼老-中证券总经理 李林
4. ທ່ານ ຫວາງ ເວີ່ຍ (MR WANG WEI) ສະມາຊິກສະພາບໍລິຫານອິດສະລະ;
   独立董事 王崴
5. ທ່ານ ນະ ຈັນຕະລີວ່ຽ ສະມາຊິກສະພາບໍລິຫານອິດສະລະ.
   独立董事 纳·占达里翁

- **ສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມກອງປະຊຸມ ຜ່ານລະບົບອອນລາຍ:**
  线上参会的董事
  1. ທ່ານ ລີ ຊາງເຫວີ່ຍ (MR LI CHANGWEI) ຮອງປະທານສະພາບໍລິຫານ;
     副董事长 李长伟
  2. ທ່ານ ໂຈ ຄຸນ (MR ZHOU KUN) ສະມາຊິກສະພາບໍລິຫານ ມອບສິດໃຫ້ ທ່ານ ເຫີ ໂປເຫວີ່ນ (MR HE BOWEN) ເປັນຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ;
     董事 周昆 授权何博文先生代表出席会议;
  3. ທ່ານ ຈາງ ຫົງບິນ (MR ZHANG HONGBIN) ສະມາຊິກສະພາບໍລິຫານ.
     董事 张洪斌

ເວລາຕໍ່ມາ, ປະທານກອງປະຊຸມ ໄດ້ລາຍງານແຕ່ລະວາລະຂອງກອງປະຊຸມສຳລັບມື້ນີ້ ແລະ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບ. ຫຼັງຈາກນັ້ນ, ກອງປະຊຸມຜູ້ຖືຮຸ້ນ ຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

董事长向参会者汇报了会议议程及投票表决方式，接下来，股东大会按照各项议程进行，具体如下：

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະດັ່ງນີ້:
股东大会审议并通过了以下议案：

<u>ວາລະທີ 1: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ</u>

<u>议案一：审议老-中证券 2024 年度工作报告暨 2025 年度经营计划</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

股东大会主席提请股东大会审议老-中证券 2024 年度工作报告暨 2025 年度经营计划，本议案的赞成票数须超过出席会议一半票数。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.

股东大会主席提请各位股东就本议案进行提问，无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

股东大会以多数赞成票通过议案如下：

- ເຫັນດີ 1,080,153,300 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,080,153,300 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

ໝາຍເຫດ: ເນື່ອງຈາກໃນ ວາລະ 1 ມີຜູ້ເຂົ້າຮ່ວມຈຳນວນ 39 ທ່ານ, ຖືຮຸ້ນລວມ 1,080,153,300 ຮຸ້ນ.

注：议案一的参会股东共 39 名，合计持有股份 1,080,153,300 股。

<u>ວາລະທີ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ</u>

<u>议案二：审议《老-中证券 2024 年度审计报告》</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ, ທີ່ຜ່ານການກວດສອບໂດຍບໍລິສັດກວດສອບພາຍນອກ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

股东大会主席提请股东大会审议《老-中证券 2024 年度审计报告》，本议案的赞成票数须超过出席会议一半票数。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.

股东大会主席提请各位股东就本议案进行提问，无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

股东大会以多数赞成票通过议案如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,083,234,900 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

<u>ວາລະທີ 3: ພິຈາລະນາ ແລະ ຮັບຮອງ ປັບປຸງບາງເນື້ອໃນ ຂອງກົດລະບຽບ ບລຈ</u>

<u>议案三：审议变更老-中证券公司章程部分内容</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ປັບປຸງບາງເນື້ອໃນ ຂອງ ກົດລະບຽບ ບລຈ, ໂດຍວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ 80% ຂອງຈຳນວນຮຸ້ນ ບລຈ ທັງ

ໝົດ. ກອງປະຊຸມຜູ້ຖືຮຸ້ນ ໄດ້ເຫັນດີຮັບຮອງໃຫ້ດຳເນີນການປັບປຸງ ມາດຕາ 8 ທຶນຈົດທະບຽນ, ມາດຕາ 10 ຮຸ້ນ ແລະ ມາດຕາ 13 ໂຄງປະກອບຂອງຜູ້ຖືຮຸ້ນ ຂອງ ກິດລະບຽບ ບລຈ, ພ້ອມທັງມອບສິດໃຫ້ຄະນະອຳນວຍການ ຍື່ນໜັງສືສະເໜີຕໍ່ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອປັບປຸງມາດຕາທີ່ກ່າວມາຂ້າງ ເທິງຂອງ ກິດລະບຽບ ບລຈ.

股东大会主席提请股东大会审议变更老-中证券公司章程部分内容，本议案的赞成票数须超过出席会议80%票数。同意变更有关第八条“注册资本和总股本”、第十三条“股东结构”相关内容，同意授权管理层向特区管理委员会申请变更公司章程上述内容。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.
股东大会主席提请各位股东就本议案进行提问，无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
股东大会以多数赞成票通过议案如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
赞成票：1,083,234,900票，占出席会议总票数的100.00%
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
反对票：0票，占出席会议总票数的0.00%

<u>ວາລະທີ 4: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ</u>
<u>议案四：审议老-中证券2024年度分红方案</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ. ກອງປະຊຸມຜູ້ຖືຮຸ້ນ ໄດ້ເຫັນດີຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ ຄືດັ່ງນີ້:

- ຈ່າຍເງິນປັນຜົນ 5 ກີບ/ຮຸ້ນ;
- ຈຳນວນເງິນປັນຜົນທັງໝົດ: 5,555,556,000 ກີບ;
- ມື້ຈ່າຍເງິນປັນຜົນ: 12 ກັນຍາ 2025.

股东大会主席提请股东大会审议老-中证券2024年度分红方案。本议案的赞成票数须超过出席会议一半票数。股东大会审议通过老-中证券2024年度如下分红方案：

- 分红：5基普/股；
- 分红金额：5,555,556,000基普；
- 分红派息日：2025年9月12日。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.
股东大会主席提请各位股东就本议案进行提问，无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
股东大会以多数赞成票通过议案如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
赞成票：1,083,234,900 票，占出席会议总票数的 100.00%
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
反对票：0 票，占出席会议总票数的 0.00%

<u>ວາລະທີ 5: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານຂອງ ບລຈ</u>
<u>议案五：审议老-中证券员工奖励方案</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານຂອງ ບລຈ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ. ກອງປະຊຸມພິຈາລະນາ ແລະ ຮັບຮອງ ເອົາ 1,880,000,000 ກີບ ຂອງສະຫວັດດີການພະນັກງານ ທີ່ບໍ່ໄດ້ແບ່ງປັນ ຫຼື ບໍ່ໄດ້ສະເໜີຫັກອອກ, ໂດຍອີງຕາມຄັງສະຫວັດດີການ ທີ່ບໍ່ໄດ້ແບ່ງປັນ ຫຼື ຄິດໄລ່ຈາກ 2018-2023, ຈ່າຍເປັນເງິນສົດໃຫ້ຄະນະອຳນວຍການ ແລະ ພະນັກງານຫັກຈາກກຳໄລສຸດທິ ຂອງ ປີ 2024. ແຜນການໃຫ້ໂບນັດພະນັກງານມີລາຍລະອຽດຄືດັ່ງນີ້:

1. ໂບນັດສຳລັບຄະນະອຳນວຍການ: 880,000,000 ກີບ:
   ຜູ້ອຳນວຍການ: 320,000,000 ກີບ;
   ຮອງຜູ້ອຳນວຍການ (2 ທ່ານ) : 280,000,000 ກີບ/ທ່ານ.
2. ໂບນັດສຳລັບພະນັກງານທັງໝົດສ່ວນທີ່ເຫຼືອ 1,000,000,000 ກີບ, ໂດຍຄະນະອຳນວຍການຈະດຳເນີນການຈັດສັນ ໂດຍເບິ່ງຕາມຜົນງານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແລະ ປະລິມານວຽກໂດຍລວມ ຂອງແຕ່ລະບຸກຄົນເປັນຕົວກຳນົດ.

股东大会主席提请股东大会审议老-中证券员工奖励方案。本议案的赞成票数须超过出席会议一半票数。审议同意将 2018-2023 年未发放和未申请计提的员工福利金共计 1,880,000,000 基普从 2024 年净利润中计提，以现金形式奖励老-中证券管理层和全体员工。具体奖励方案如下：

1、 管理层奖励 880,000,000 基普：
   总经理：320,000,000 基普；
   副总经理（2 名）：280,000,000 基普/人。
2、 剩余全体员工奖励 1,000,000,000 基普，由管理层根据个人业绩贡献和工作量综合评定后进行合理分配。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.
股东大会主席提请各位股东就本议案进行提问，无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
股东大会以多数赞成票通过议案如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
赞成票：1,083,234,900 票，占出席会议总票数的 100.00%
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
反对票：0 票，占出席会议总票数的 0.00%

ວາລະທີ 6: ພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນຂອງພະນັກງານ ບລຈ
议案六：审议老-中证券员工薪酬调整方案

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນ ຂອງພະນັກງານ ບລຈ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ. ກອງປະຊຸມພິຈາລະນາ ແລະ ຮັບຮອງ ການແຜນການປັບປຸງເງິນເດືອນ ຂອງ ພະນັກງານ ບລຈ ດັ່ງນີ້:

1. ເພີ່ມລະດັບເງິນເດືອນພື້ນຖານຂອງພະນັກງານຂຶ້ນ 100%, ໂດຍເລີ່ມຈັດຕັ້ງປະຕິບັດນັບແຕ່ເດືອນ ມັງກອນ ປີ 2025 ເປັນຕົ້ນໄປ. ຫຼັງຈາກປັບປຸງເງິນເດືອນແລ້ວ, ຄ່າໃຊ້ຈ່າຍເງິນເດືອນພື້ນຖານຈະບໍ່ເກີນ 720 ລ້ານກີບ/ເດືອນ. ເພື່ອກວມເອົາຄວາມຕ້ອງການຂອງຈຳນວນພະນັກງານທີ່ເພີ່ມຂຶ້ນໃນອະນາຄົດ ແມ່ນ ໃຫ້ຄະນະອຳນວຍການຄວບຄຸມຄ່າໃຊ້ຈ່າຍລວມຂອງເງິນເດືອນພື້ນຖານບໍ່ເກີນ 800 ລ້ານກີບ/ເດືອນ.
2. 50% ຂອງເງິນເດືອນພື້ນຖານປະຈຸບັນ ຖືເປັນເງິນເດືອນຕາມຜົນງານ, ໂດຍມີແຜນອ້າງອີງດັ່ງນີ້: ມອບສິດໃຫ້ຄະນະອຳນວຍການພາຍຫຼັງຮັບປະກັນການເບີກຈ່າຍເງິນເດືອນຕາມຜົນງານ, ພາຍໃຕ້ເງື່ອນໄຂ ROE ຂອງ ບລຈ ຈະບໍ່ຕ່ຳກວ່າ 9%, ສາມາດອອກໃຫ້ຕາມຫຼັງ ບົດລາຍງານການກວດສອບປະຈຳປີຂອງ ທຸກໆປີ ໄດ້ຜ່ານການຮັບຮອງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນແລ້ວ.
3. ຖ້າຫາກ ບລຈ ປາກົດມີການຂາດທຶນຢ່າງຕໍ່ເນື່ອງ ຈະຕ້ອງໄດ້ມີການປັບປຸງລະບົບເງິນເດືອນ.
4. ມອບສິດໃຫ້ຄະນະອຳນວຍການດຳເນີນການປະຕິບັດຕົວຈິງ.

股东大会主席提请股东大会审议老-中证券员工薪酬调整方案。本议案的赞成票数须超过出席会议一半票数。股东大会审议通过以下老-中证券员工薪资调整方案：

1、员工固定基础薪资上浮 100%，自 2025 年 1 月开始执行。薪酬调整后，基础薪酬开支不超过 7.2 亿基普/月。涵盖未来增加员工人数需求，要求管理层控制基础薪酬开支不高于 8 亿基普/月。
2、现有薪资 50%部分作为绩效工资，发放方案如下：
授权管理层在确保发放绩效工资后，公司净资产收益率不低于 9%的情况下，可在每年年度审计报告经股东大会审议通过后补发。
3、如老-中证券出现连续亏损，应对薪酬体系做出调整。
4、授权管理层负责按股东大会决议落实。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.
股东大会主席提请各位股东就本议案进行提问，无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
股东大会以多数赞成票通过议案如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
赞成票：1,083,234,900 票，占出席会议总票数的 100.00%
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
反对票：0 票，占出席会议总票数的 0.00%

ວາລະທີ 7: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ບລຈ
议案七：审议老-中证券董事会津贴方案

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ບລຈ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ. ກອງປະຊຸມຜູ້ຖືຮຸ້ນ ໄດ້ເຫັນດີຮັບຮອງການເບີກຈ່າຍເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ໂດຍເບີກຈ່າຍເປັນທຸກໆເຄິ່ງປີ, ຕາມມາດຕະຖານການເບີກຈ່າຍດັ່ງນີ້:

1. ປະທານສະພາບໍລິຫານ: 35,000,000 ກີບ;
2. ຮອງປະທານສະພາບໍລິຫານ: 30,000,000 ກີບ;
3. ສະມາຊິກສະພາບໍລິຫານ (6 ທ່ານ): 25,000,000 ກີບ/ທ່ານ.

*ໝາຍເຫດ: 1. ຍ້ອນທ່ານຜູ້ອຳນວຍການ ແລະ ສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ ໄດ້ຮັບໂບນັດຂອງຄະນະອຳນວຍການແລ້ວ ແລະ ຈະບໍ່ໄດ້ຮັບເງິນອຸດໜູນຊ້ຳອີກໃນສ່ວນຂອງສະມາຊິກສະພາບໍລິຫານ;

2. ຫຼັງຈາກຮັບປະກັນການເບີກຈ່າຍເງິນອຸດໜູນຂອງສະມາຊິກສະພາບໍລິຫານແລ້ວ, ຈະໃຫ້ການເບີກຈ່າຍພາຍໃຕ້ສະພາບຂອງ ROE ຂອງ ບລຈ ບໍ່ຕ່ຳກວ່າ 9% ຕໍ່ປີ. ກໍລະນີ ROE ປະຈຳປີ ຈາກຜົນການດຳເນີນງານ ຕ່ຳກວ່າ 9%, ເວລານັ້ນຈະບໍ່ມີການເບີກຈ່າຍເງິນອຸດໜູນໃຫ້ແກ່ສະມາຊິກສະພາບໍລິຫານ;

3. ການເບີກຈ່າຍເງິນອຸດໜູນຂອງສະມາຊິກສະພາບໍລິຫານຈະເລີ່ມແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ.

股东大会主席提请股东大会审议老-中证券董事会津贴方案。本议案的赞成票数须超过出席会议一半票数。股东大会同意根据公司经营情况每半年发放一次董事会津贴，按如下标准发放：

1、 董事长：35,000,000 基普；
2、 副董事长：30,000,000 基普；
3、 董事（6 名）：25,000,000 基普/人。

*注：1、总经理兼执行董事参与公司管理层激励体系，不参与领取董事津贴；
2、在确保董事津贴发放后，公司净资产收益率不低于 9%的情况下给予发放。经营业绩年化净资产收益率低于 9%的情形，当期不发放董事津贴；
3、董事会津贴发放起始日期为 2025 年 1 月 1 日。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.
股东大会主席提请各位股东就本议案进行提问，无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
股东大会以多数赞成票通过议案如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
赞成票：1,083,234,900 票，占出席会议总票数的 100.00%
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
反对票：0 票，占出席会议总票数的 0.00%

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມໃນເວລາ 10:30 ໂມງ ຂອງວັນດຽວກັນ.
股东大会主席对出席股东大会的股东及股东代表表示感谢并宣布会议于当日北京时间 11:30 闭幕。

ປະທານກອງປະຊຸມ	ຜູ້ບັນທຶກ
会议主席	会议记录
ທ່ານ ໜູໄຊ ພູມສຸວັນ	ທ່ານ ອານຸຍຸດ ລາດສະຊັບ
努赛·普苏万	阿鲁育·拉沙萨

ບົດລາຍງານ ຜົນການດຳເນີນທຸລະກິດ ບລຈ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ບລຈ ປະຈຳປີ 2026

老-中证券 2025 年度工作报告暨 2026 年度经营计划

ປີ 2025 ເປັນປີທີ່ມີຄວາມໝາຍສຳຄັນໃນປະຫວັດການພັດທະນາຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ຕໍ່ໄປເອີ້ນຫຍໍ້ວ່າ “ບລຈ”). ດ້ວຍຄວາມພະຍາຍາມຮ່ວມກັນຂອງພະນັກງານທຸກຄົນ ບລຈ ໄດ້ສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ແລະ ເຂົ້າຈົດທະບຽນໃນ ຕະຫຼາດຫຼັກຊັບລາວ (ຕລຊລ), ຊຶ່ງເປັນບາດກ້າວໃໝ່ອັນສຳຄັນໃນການພັດທະນາ ບລຈ. ພ້ອມກັນນັ້ນ, ບລຈ ຍັງໄດ້ຊຸກຍູ້ໂຄງການທີ່ປຶກສາທາງດ້ານການເງິນທີ່ສຳຄັນ ກໍຄື: ໂຄງການ IPO ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ແລະ ໂຄງການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ). ນອກຈາກນັ້ນ, ບລຈ ຍັງໄດ້ສືບຕໍ່ເຮັດວຽກງານເປັນທີ່ປຶກສາດ້ານການເງິນ ແລະ ຮ່ວມຄ້ຳປະກັນການອອກຈຳໜ່າຍພັນທະບັດລັດຖະບານ.

2025 年是老-中证券公众公司（以下简称 “公司”）具有里程碑意义的一年。在全体员工的共同努力下，公司成功完成了首次公开募股（IPO）并在老挝证券交易所（以下简称 “老交所”）上市，标志着公司发展迈入了新阶段。同时，公司顺利完成了联合开发银行（JDB）的 IPO 和外贸银行配股及公开发行等重点投行项目，继续做好国债财务顾问和代销工作。

ໃນເວລາທີ່ ບລຈ ສາມາດບັນລຸຜົນງານດີໄດ້, ກໍ່ໄດ້ຮັບການຍ້ອງຍໍສັນລະເສີນຈາກສຳນັກງານຄະນະກຳມະການຄຸ້ມຄ້ອງຫຼັກຊັບ (ສຄຄຊ) ແລະ ຕລຊລ. ໃນກອງປະຊຸມສະຫຼຸບຜົນງານ 15 ປີຂອງຕະຫຼາດທຶນລາວ ໃນວັນທີ 11 ພະຈິກ, ຊຶ່ງ ບລຈ ໄດ້ຮັບລາງວັນ “ຜົນການດຳເນີນງານ 15 ປີ ຂອງຕະຫຼາດທຶນລາວ” ຈາກປະທານ ຄຄຊ. ນອກນັ້ນ, ໃນງານມອບລາງວັນປະຈຳປີຂອງ ຕລຊລ ຄັ້ງວັນທີ 18 ທັນວາ, ບລຈ ໄດ້ຮັບໃບຍ້ອງຍໍຜົນງານລາງວັນ “ການເປີດເຜີຍຂໍ້ມູນປະຈຳປີ 2025” ແລະ ອີກ 3 ລາງວັນ ດັ່ງນີ້: “ລາງວັນທີ່ປຶກສາດ້ານການເງິນດີເດັ່ນ”, “ລາງວັນປັນຜົນດີເດັ່ນ” ແລະ “ລາງວັນບໍລິສັດລະດົມທຶນດີເດັ່ນ”.

在公司取得良好业绩的同时，也获得了证管委和老交所的荣誉认可：在 11 月 11 日举行的老挝资本市场 15 周年成果总结大会上，公司荣获证管委主席颁发的 “资本市场 15 周年运营成果奖状”。在 12 月 18 日的老交所年度颁奖典礼上，公司斩获 “2025 年度信息披露奖” 奖状，并荣获 “最佳财务顾问奖”、“最佳分红奖” 和 “最佳融资奖” 三座亚克力奖杯。

ດັ່ງນັ້ນ, ຈຶ່ງຂໍລາຍງານ ຜົນການດຳເນີນທຸລະກິດ ບລຈ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ບລຈ ປະຈຳປີ 2026 ດັ່ງລຸ່ມນີ້:

现将公司 2025 年度主要工作情况及 2026 年度经营计划汇报如下：

I. ການອອກຈຳໜ່າຍຮຸ້ນຄັ້ງທຳອິດຕໍ່ມວນຊົນ (IPO) ແລະ ເຂົ້າຈົດທະບຽນໃນ ຕລຊລ
首次公开募股（IPO）和在老交所上市工作

ອີງຕາມການມອບສິດຂອງ ມະຕິກອງສະພາບໍລິຫານ ບລຈ ສະໄໝວິສາມັນ ຄັ້ງທີ 2 ປະຈຳປີ 2024, ໃນວັນທີ 13 ມັງກອນ 2025, ບລຈ ໄດ້ຍື່ນສະເໜີ ຂໍອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ ເຖິງ ສຄຄຊ ແລະ ໃນວັນທີ 17 ມີນາ ໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນຄັ້ງທຳອິດຈາກ ສຄຄຊ. ວັນທີ 3 ເມສາ, ບລຈ ໄດ້ສຳເລັດການດຳເນີນການອອກຈຳໜ່າຍອອກຈຳໜ່າຍຮຸ້ນໃໝ່ລົງດ້ວຍດີ, ລວມຮຸ້ນທີ່ອອກຈຳໜ່າຍຈຳນວນ 111,111,200 ຮຸ້ນ, ມູນຄ່າກຳນົດ 100 ກີບ/ຮຸ້ນ, ລາຄາອອກຈຳໜ່າຍ 130 ກີບ/ຮຸ້ນ, ໄດ້ລະດົມທຶນລວມ 14,444,456,000 ກີບ. ໃນນັ້ນ ປະກອບມີ ເງິນສ່ວນເກີນມູນຄ່າຮຸ້ນຈຳນວນ 2,360,038,519 ກີບ ແລະ ເງິນເພີ່ມທຶນຈົດທະບຽນຈຳນວນ 11,111,120,000 ກີບ. ໃນວັນທີ 9 ເມສາ ໄດ້ຮັບໜັງສືແຈ້ງຕອບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຂອງ ບລຈ ຈາກ ສຄຄຊ. ໃນວັນທີ 10 ເມສາ, ໄດ້ຍື່ນໃບສະເໜີຂໍຈົດທະບຽນຮຸ້ນ ທີ່ ຕລຊລ, ວັນທີ 22 ເມສາ ໄດ້ຮັບໃບອະນຸຍາດການຈົດທະບຽນຮຸ້ນຈາກ ຕລຊລ. ໃນວັນທີ 25 ເມສາ, ບລຈ ໄດ້ຈັດພິທີສະຫຼອງວັນຊື້ ຂາຍຮຸ້ນຄັ້ງທຳອິດ ແລະ ໄດ້ເຊັນສັນຍາຂຶ້ນທະບຽນຊື້ ຂາຍກັບ ຕລຊລ, ເປັນການເຂົ້າຈົດທະບຽນຢ່າງເປັນທາງການ.

根据老-中证券2024年第二次临时董事会会议决议授权，公司于2025年1月13日向证管委办公厅正式提交《首次公开发行股票申请》，3月17日获得证管委办公厅颁发的《首次公开发行股票许可证》。4月3日公司顺利完成新股发行工作，共计发行111,111,200股，面值100基普/股（约合0.032元/股），公开发行价格130基普/股（约合0.042元/股），募集资金14,444,456,000基普（约合465.95万元）。其中包括，股份溢价2,360,038,519基普（约合76.13万元），增加注册资本金11,111,120,000基普（约合358.42万元）。于4月9日获得证管委办公厅《关于确认老-中证券公众公司公开发行股票结果的批复》。4月10日向老交所提交《股票登记申请》，于4月22日获得老交所《关于批准股票登记的批复》。4月25日公司举行首个交易日庆典活动，与老交所签署上市协议，正式上市。

II. ວຽກງານທີ່ກ່ຽວຂ້ອງກັບກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິຫານ
董事会会议和股东会

ພາຍໃຕ້ການສະໜັບສະໜູນຢ່າງເຕັມທີ່ຈາກຜູ້ຖືຮຸ້ນ ແລະ ສະມາຊິກສະພາບໍລິຫານທຸກທ່ານ, ບລຈ ໄດ້ສຳເລັດການຈັດກອງປະຊຸມສະພາບໍລິຫານຈຳນວນ 4 ຄັ້ງ ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2024, ພ້ອມທັງໄດ້ລາຍງານມະຕິກອງປະຊຸມຕໍ່ ສຄຄຊ ຢ່າງທັນເວລາ ແລະ ໄດ້ເຜີຍແຜ່ຂໍ້ມູນຕາມລະບຽບກຳນົດຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊລ.

在全体股东和董事会成员的大力支持下，公司成功召开4次董事会会议和2024年度股东会，并将会议决议及时向证管委办公厅汇报并按规定在老交所网站进行了信息披露。

III. ສະພາບການດຳເນີນທຸລະກິດປະຈຳປີ
年度经营情况

ມາຮອດວັນທີ 31 ທັນວາ 2025, ບລຈ ມີຊັບສິນລວມປະມານ 237.56 ຕື້ກີບ, ຊັບສິນສຸດທິປະມານ 164.90 ຕື້ກີບ. ລາຍຮັບຈາກການດຳເນີນງານຕົວຈິງໃນໄລຍະການລາຍງານປະມານ 43.82 ຕື້ກີບ ແລະ ມີກຳໄລສຸດທິປະມານ 27.30 ຕື້ກີບ.

截至 2025 年 12 月 31 日，公司总资产 2,375.56 亿基普（约合 7,663.11 万元），净资产 1,649.01 亿基普（约合 5,319.41 万元）。报告期内实现营业收入 438.24 亿基普（约合 1,413.67 万元），净利润 273.03 亿基普（约合 880.75 万元）。

ຕາຕະລາງກຳໄລຂາດທຶນທີ່ກ່ຽວຂ້ອງກັບການປ່ຽນແປງລາຍການບັນຊີ

ລາຍການ	31 ທັນວາ 2024 (ກີບ)	31 ທັນວາ 2025 (ກີບ)	ສັດສ່ວນການປ່ຽນແປງ
ລາຍຮັບຈາກການດຳເນີນງານ	15,805,189,364	43,824,002,467	177.28%
ລາຍຈ່າຍຈາກການດຳເນີນງານ	4,484,391,136	16,520,610,359	268.40%
ກຳໄລກ່ອນອາກອນ	11,320,798,228	27,303,392,108	141.18%
ກຳໄລສຸດທິ	11,320,798,228	27,303,392,108	141.18%
ອັດຕາສ່ວນກຳໄລສຸດທິ	71.63%	62.30%	-13.02%
ROE	10.01%	18.82%	88.01%

利润表相关科目变动表

项　目	2024 年 12 月 31 日		2025 年 12 月 31 日		变动比例
	基普	合人民币万元	基普	合人民币万元	
营业收入	15,805,189,364	509.84	43,824,002,467	1,413.67	177.28%
营业支出	4,484,391,136	144.66	16,520,610,359	532.92	268.40%
利润总额	11,320,798,228	365.19	27,303,392,108	880.75	141.18%
净利润	11,320,798,228	365.19	27,303,392,108	880.75	141.18%
净利率	71.63%		62.30%		-13.02%
净资产收益率	10.01%		18.82%		88.01%

IV. ສະພາບພື້ນຖານຂອງບັນດາທຸລະກິດຫຼັກຂອງ ບລຈ ໃນປີ 2025 ມີດັ່ງນີ້:
2025 年公司各主营业务基本情况如下：

1. ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ
投行业务

ໃນປີ 2025, ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຂອງ ບລຈ ໄດ້ມີລາຍຮັບຈາກການດຳເນີນງານ ຈຳນວນ 22,419,612,630 ກີບ. ໃນນັ້ນແມ່ນມາຈາກການທີ່ ບລຈ ໃນຖານະເປັນທີ່ປຶກສາດ້ານການເງິນຫຼັກ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ໄດ້ສຳເລັດໂຄງການ IPO ຂອງ JDB ແລະ ໂຄງການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຂອງ ທຄຕລ.

2025 年公司投行业务营业收入 22,419,612,630 基普（约合 723.21 万元）。公司作为主财务顾问和和主承销商，完成了联合开发银行（JDB）的 IPO 并在老交所上市项目以及外贸银行 IPO 配股并公开发行股票项目。

ໄດ້ລົງນາມໃນສັນຍາການບໍລິການທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ກັບ ທະນາຄານ ບີໄອຊີ ລາວ ຈຳກັດ (BIC) ແລະ ບໍລິສັດ ຍອດງຶ່ມ ພາວເວີ ຈຳກັດ. ໄດ້ ຮ່ວມກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ ແລະ ບໍລິສັດ LOCA ຈຳກັດ ໃນການລົງນາມສັນຍາການບໍລິການທີ່ປຶກສາດ້ານການເງິນ. ພ້ອມທັງໄດ້ລົງນາມໃນບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືການບໍລິການທີ່ປຶກສາດ້ານການເງິນ ສຳລັບການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ກັບ ທະນາຄານລາວ–ຈີນ.

分别与商业投资银行（BIC）、略乌电力有限公司签署首次公开募股（IPO）财务顾问协议。联合外贸-恭泰证券、老挝开发银行证券与 LOCA 有限公司签署绿色债发行财务顾问合同，与老-中银行签署首次公开募股（IPO）财务顾问合作备忘录。

2. ວຽກງານ ຄ້າຫຼັກຊັບ
自营业务

ໃນປີ 2025 ວຽກງານຄ້າຫຼັກຊັບມີກຳໄລຈາກການດັດແປງມູນຄ່າຍຸດຕິທຳ ຢູ່ທີ່ 12,922,927,650 ກີບ. ໃນນັ້ນ, ໄດ້ລວມກຳໄລມູນຄ່າຍຸຕິທຳ ຂອງການລົງທຶນຫຼັກຊັບໄລຍະສັ້ນ.

2025 年自营业务收益 12,922,927,650 基普（约合 416.87 万元）。其中，包括短期证券投资公允价值变动盈利 6,156,313,273 基普（约合 198.59 万元）。

3. ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ
经纪业务

ໃນປີ 2025, ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ ຂອງບໍລິສັດໄດ້ມີລາຍຮັບຕົວຈິງ 10,598,346,560 ກີບ. ໃນນັ້ນ, ລາຍຮັບວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ 102,262,352 ກີບ ແລະ ລາຍຮັບວຽກງານຕົວແທນຈຳໜ່າຍພັນທະບັດລັດຖະບານ 10,496,084,208 ກີບ.

2025年公司实现经纪业务收入10,598,346,560基普（约合341.88万元）。其中，证券经纪业务收入102,262,352基普（约合3.30万元），国债代销业务收入10,496,084,208基普（约合338.58万元）。

4. ວຽກງານ ບໍລິຫານກອງທຶນ
私募基金管理业务

ພະນັກງານຂອງບໍລິສັດຈຳນວນ 5 ຄົນ ໄດ້ຜ່ານການສອບເສັງຮັບຮອງຄຸນສົມບັດຜູ້ປະກອບວິຊາຊີບກອງທຶນ ທີ່ຈັດໂດຍ ຕລຊລ.

ພ້ອມກັນນັ້ນ ບໍລິສັດໄດ້ເຄື່ອນໄຫວຢ່າງຕັ້ງໜ້າ ໃນການແລກປ່ຽນທາງດ້ານເຕັກນິກ ແລະ ປຶກສາຫາລືການຮ່ວມມືກັບພາກສ່ວນຕ່າງໆ ກ່ຽວກັບການຈັດຕັ້ງກອງທຶນສ່ວນບຸກຄົນ. ຢ່າງໃດກໍຕາມ ດ້ວຍການຕັດສິນໃຈຢ່າງຮອບຄອບ ຫຼັງຈາກໄດ້ດຳເນີນການສຶກສາຄົ້ນຄວ້າແລ້ວ ພົບວ່າ ລະບົບກອງທຶນຮ່ວມມີຄ່າໃຊ້ຈ່າຍໃນການພັດທະນາສູງ ຕ້ອງໃຊ້ການລົງທຶນໃນເບື້ອງຕົ້ນຫຼາຍ ແລະ ມີຄວາມສ່ຽງດ້ານການດຳເນີນງານສູງ. ເພື່ອຮັບປະກັນການດຳເນີນທຸລະກິດຢ່າງໝັ້ນຄົງ ບໍລິສັດຈຶ່ງສະເໜີໃນປະຈຸບັນຍັງບໍ່ຄວນສ້າງຕັ້ງບໍລິສັດບໍລິຫານກອງທຶນເປັນບໍລິສັດລູກ ເພື່ອຫຼີກລ່ຽງການຂະຫຍາຍທຸລະກິດກອງທຶນຮ່ວມໂດຍຂາດຄວາມຮອບຄອບ.

公司5名员工通过了老交所组织的基金从业人员资格考试。

积极与各方就设立私募基金进行技术交流和探讨合作。审慎决策：经过调研，发现公募基金系统开发费用高昂、前期投入及运营风险较大，为确保稳健经营，公司建议现阶段不设立投资基金管理子公司，避免盲目拓展公募基金业务。

V. ວຽກງານບຸກຄະລາກອນ
人力工作

ໄດ້ດຳເນີນການສົ່ງມອບວຽກລະຫວ່າງພະນັກງານຜູ້ເກົ່າ ແລະ ຜູ້ໃໝ່ ຂອງພະແນກບັນຊີ-ການເງິນ, ພະແນກການຄ້າຫຼັກຊັບ ແລະ ຜູ້ຮັບຜິດຊອບວຽກງານກອງເລຂານຸການ ສຳເລັດດ້ວຍດີ. ໄດ້ຈັດຕັ້ງໃຫ້ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມການຝຶກອົບຮົມດ້ານການເຜີຍແຜ່ຂໍ້ມູນຕາມມາດຕະຖານບັນຊີສາກົນ ແລະ ການຝຶກອົບຮົມຫົວຂໍ້ສະເພາະທີ່ກ່ຽວກັບລາຍງານການເງິນ. ໄດ້ປະສານງານກັບຄະນະກຳມະການບໍລິຫານເຂດພິເສດ ເພື່ອດຳເນີນການກວດກາສະຖານທີ່

ຫ້ອງການໃຫ້ສຳເລັດ. ພ້ອມທັງ ໄດ້ດຳເນີນການສຳພາດພະນັກງານ ແລະ ຈັດຝຶກງານຢ່າງເປັນລະບຽບ ເພື່ອເພີ່ມພະນັກງານໃໝ່ໃຫ້ແກ່ພະແນກທີ່ປຶກສາທາງດ້ານການເງິນ ແລະ ພະແນກບັນຊີ-ການເງິນ.

完成了财务部门、自营业务部门、秘书处负责人的新老交接工作。组织相关人员参加了国际会计通用准则信息披露培训及财务报告相关专题培训。配合特区管理委员会完成了劳工现场检查工作。有序开展了员工面试和实习工作，为投行及财务部门补充了新员工。

VI. ການພັດທະນາລະບົບຊື້ຂາຍຫຼັກຊັບຜ່ານໂທລະສັບມືຖື
手机证券交易系统开发

ບລຈ ໄດ້ຮ່ວມກັບ ບໍລິສັດ HITHINK INTERNATIONAL (SINGAPORE) PTE. LTD ແລະ ບໍລິສັດຫຼັກຊັບ ແອລ໌ດີບີ ລາຍງານຄວາມຄືບໜ້າການພັດທະນາລະບົບຊື້ ຂາຍຫຼັກຊັບຜ່ານໂທລະສັບມືຖື ຕໍ່ ສຄຄຊ ແລະ ຕລຊລ. ພ້ອມກັນນັ້ນ, ໄດ້ປຶກສາຫາລືຢ່າງລະອຽດກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບແຜນງານດ້ານເຕັກນິກ ແລະ ແຜນງານການເຊື່ອມຕໍ່ລະບົບໂອນເງິນລະຫວ່າງທະນາຄານກັບລະບົບຫຼັກຊັບ.

ບລຈ ໄດ້ປະສານງານກັບ ຕລຊລ ໃນການດຳເນີນການກວດກາຫ້ອງເຊີເວີ ແລະ ລະບົບເຕັກໂນໂລຊີຂໍ້ມູນ ໃຫ້ສຳເລັດ ພ້ອມທັງໄດ້ດຳເນີນການແປພາສາເມນູໃນລະບົບຝັ່ງຜູ້ໃຊ້ບໍລິການໃຫ້ສຳເລັດ. ນອກຈາກນັ້ນ ບລຈ ໄດ້ລົງນາມໃນສັນຍາເຊົ່າບໍລິການຄລາວກັບ ບໍລິສັດໂທລະຄົມມະນາຄົມລາວ, ສຳເລັດການຕິດຕັ້ງ ແລະ ນຳໃຊ້ລະບົບຝັ່ງເຊີເວີ ພ້ອມທັງໄດ້ດຳເນີນການຂໍເປີດບັນຊີນັກພັດທະນາແອັບພລິເຄຊັນ ໃນຮ້ານຄ້າແອັບພລິເຄຊັນຮຽບຮ້ອຍແລ້ວ. ພ້ອມກັນນັ້ນ ໄດ້ປຶກສາຫາລືກັບທີມງານ HITHINK ເພື່ອເພີ່ມຟັງຊັນການເປີດບັນຊີຫຼັກຊັບຜ່ານແບບຟອມອອນລາຍ.

与核新国际、老挝开发银行证券共同向证管委办公厅及老交所汇报了手机证券交易系统开发进展。与相关方就技术方案、银证转账接口方案进行了深入讨论。

配合老交所完成了机房及信息技术系统检查，并完成了客户端菜单翻译工作。与老挝电信签订了云服务租赁协议，完成了服务器端部署，并申请了应用商店开发者账号。与核新同花顺团队协商增加了证券账户线上表单开户功能。

VII. ການຮ່ວມມືກັບພາຍນອກ
对外合作

ການຮ່ວມມືກັບອົງການຄຸ້ມຄອງ ແລະ ຕະຫຼາດຫຼັກຊັບ:
与监管机构及交易所：

ໄດ້ຕິດຕາມຄະນະ ສຄຄຊ ເຂົ້າເຂົ້າຢ້ຽມຢາມ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປ.ຈີນ ແລະ ໄດ້ຈັດການປະຊຸມຫາລື ແລະ ແລກປ່ຽນຄວາມຄິດເຫັນກັບພາກສ່ວນທີ່ກ່ຽວຂ້ອງ. ໃນໄລຍະດຽວກັນ, ໄດ້ເຂົ້າຢ້ຽມຢາມ ບໍລິສັດ ຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ ແລະ ໄດ້ຈັດການປະຊຸມຫາລືກັບຄະນະຜູ້ບໍລິຫານລະດັບສູງຂອງບໍລິສັດ.

ໄດ້ຕິດຕາມຄະນະ ຕລຊລ ເຂົ້າຢ້ຽມຢາມຕະຫຼາດຫຼັກຊັບເຊີນເຈີ້ນ ແລະ ໄດ້ເຂົ້າຮ່ວມພິທີຕໍ່ອາຍຸບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງຕະຫຼາດຫຼັກຊັບເຊີນເຈີ້ນ ແລະ ຕລຊລ.

ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນງານຕ່າງໆ ເຊັ່ນ: ງານມະຫະກຳການເງິນລາວ, ກິດຈະກຳຄົບຮອບ 15 ປີ ຂອງຕະຫຼາດທຶນລາວ ແລະ ກອງປະຊຸມພົບປະລະຫວ່າງ ບໍລິສັດຈົດທະບຽນ ແລະ ຜູ້ລົງທຶນ.

ໄດ້ເຂົ້າຮ່ວມການໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນ, ໂດຍປະກອບມີການຈັດບັນຍາຍຫົວຂໍ້ຕ່າງໆ ເຊັ່ນ: “ຫຼັກການວິເຄາະມູນຄ່າຫຼັກຊັບ” ແລະ ກິດຈະກຳສົ່ງເສີມຕະຫຼາດທຶນລາວ.

ໄດ້ມີສ່ວນຮ່ວມໃນຫຼາຍວຽກງານຂອງ ສຄຄຊ ແລະ ຕລຊລ ເຊັ່ນ: ແຜນພັດທະນາຕະຫຼາດທຶນລາວ, ການປັບປຸງນິຕິກຳຕ່າງໆ ແລະ ການສຳຫຼວດແບບສອບຖາມຈາກຜູ້ລົງທຶນ.

陪同证管委办公厅访问中国证监会，并与证监会相关部门进行了座谈交流。期间，访问太平证券股份有限公司，与公司高管进行了座谈。

陪同老交所访问深交所，并参与了深交所与老交所的谅解备忘录续签仪式。

积极参加了老挝金融博览会、资本市场 15 周年系列活动、上市公司与投资者见面会等。

配合开展了资本市场宣传工作，包括《证券价值分析原则》讲座及走进老挝资本市场宣传活动。

参与了多项与证管委办公厅、老交所相关的资本市场发展规划、信息披露通知修订、机构投资者问卷调查等工作。

ການຮ່ວມມືກັບບໍລິສັດຫຼັກຊັບອື່ນໆ:

与其他证券公司合作：

ໄດ້ເຂົ້າຮ່ວມກັບ 3 ບໍລິສັດຫຼັກຊັບ ຄື: ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ ແລະ ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ ເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການເພີ່ມທະວີການຮ່ວມມື ກັບ ກະຊວງການເງິນ ເພື່ອຮ່ວມກັນຊຸກຍູ້ການປະຕິຮູບລັດວິສາຫະກິດ ແລະ ເຂົ້າຈົດທະບຽນໃນ ຕລຊລ. ໄດ້ເຂົ້າຮ່ວມການຫາລືຂອງຄະນະກຳມະການປະຕິຮູບລັດວິສາຫະກິດ ກ່ຽວກັບການປັບປຸງໜ້າທີ່ພາຍຫຼັງການປະຕິຮູບໂຄງສ້າງອົງການຂອງລັດ ແລະ ມີແຜນການຈະລົງນາມບັນທຶກຄວາມເຂົ້າໃຈໃໝ່ຮ່ວມກັບບັນດາ ບໍລິສັດຫຼັກຊັບ.

与外贸银行-恭泰证券、联合开发银行证券和 APMLAO 三家证券公司共同与老挝财政部联合签署合作备忘录，共同推动国企改革及上市。参与了国企改革委员会关于政府机构改革后职能调整的讨论，并拟与各证券公司重新签署合作备忘录。

ແຜນການດຳເນີນທຸລະກິດ ປະຈຳປີ 2026

2026年度经营计划

ບລຈ ມີແຜນການດຳເນີນທຸລະກິດ ປະຈຳປີ 2026 ໂດຍເນັ້ນໃສ່ບາງວຽກງານດັ່ງລຸ່ມນີ້:

展望2026年，公司将重点聚焦以下几个方面的工作：

1. ວຽກງານການບໍລິຫານ ແລະ ການຈ່າຍເງິນປັນຜົນ

公司治理与分红

ມີແຜນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ໃນເດືອນ ເມສາ 2026, ເພື່ອພິຈາລະນາຮອງຮັບ ແລະ ກຳນົດແຜນການຈ່າຍເງິນປັນຜົນປະຈຳປີ ແລະ ດຳເນີນການຈ່າຍເງິນປັນຜົນໃຫ້ສຳເລັດ.

计划于2026年4月召开董事会会议和2025年度股东会，审议并确定年度分红方案，完成分红工作。

2. ແຜນການນຳໃຊ້ເງິນທຶນທີ່ລະດົມໄດ້

募集资金使用规划

ຈະຈັດປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ວິສາມັນ ໃນເວລາທີ່ເໝາະສົມ ເພື່ອພິຈາລະນາວ່າ ເງິນທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ ຈະຖືກນຳໄປໃຊ້ຕາມແຜນການໃນການຈັດຕັ້ງ ບໍລິສັດບໍລິຫານກອງທຶນ ຫຼື ຈະມີການປ່ຽນແປງຈຸດປະສົງການນຳໃຊ້ເງິນທຶນເພື່ອເສີມສ້າງສະພາບຄ່ອງຂອງບໍລິສັດ.

适时召开董事会会议和临时股东会，审议首次公开募股（IPO）募集资金是否按计划设立投资基金管理公司，或变更募集资金用途以补充公司流动性。

3. ການນຳລະບົບຊື້ຂາຍຫຼັກຊັບຜ່ານໂທລະສັບມືຖືເຂົ້ານຳໃຊ້

手机证券交易系统上线

ຈະພະຍາຍາມດຳເນີນການພັດທະນາ ແລະ ທົດສອບລະບົບຊື້ ຂາຍຫຼັກຊັບຜ່ານໂທລະສັບມືຖືໃຫ້ສຳເລັດໂດຍໄວ ເພື່ອໃຫ້ໄດ້ນຳໃຊ້ງານໂດຍໄວ ເພື່ອຍົກສູງການບໍລິການລູກຄ້າໃຫ້ດີຍິ່ງຂຶ້ນ.

力争尽快完成手机证券交易系统的开发和测试工作，争取早日投入使用，提升客户服务体验。

4. ການຄົ້ນຄວ້ານະວັດຕະກຳດ້ານທຸລະກິດ ແລະ ຜະລິດຕະພັນ

业务与产品创新探索

ອີງຕາມການສະເໜີຂອງ ຕລຊລ, ບລຈ ຈະຮ່ວມຄົ້ນຄວ້າຄວາມເປັນໄປໄດ້ໃນການສຶກສາຄວາມເປັນໄປໄດ້ສຳລັບການອອກຈຳໜ່າຍຜະລິດຕະພັນໃບຢັ້ງຢືນການຝາກຮັບຫຼັກຊັບ, ໂດຍສຳຫຼວດຄວາມເປັນໄປໄດ້ໃນການນຳໃຊ້ ETF ຄຳຂອງຕະຫຼາດຫຼັກຊັບຮົງກົງ ຫຼື ETF50 ຂອງຕະຫຼາດຫຼັກຊັບຈີນແຜ່ນດິນໃຫຍ່ A-share ເປັນຊັບສິນອ້າງອີງ, ເພື່ອອອກຈຳໜ່າຍໃນ ຕລຊລ ແລະ ພິຈາລະນາຄວາມເປັນໄປໄດ້ໃນການດຳເນີນທຸລະກິດຜູ້ສ້າງສະພາບຄ່ອງ (Market Maker).

根据老交所要求，牵头准备发行存托凭证产品的可行性研究方案，探索以港交所黄金 ETF 或 A 股创业板 ETF50 为底层资产，在老交所发行存托凭证产品和开展做市商业务的可行性。

5. ເສີມສ້າງຄວາມເຂັ້ມແຂງການບໍລິການທີ່ປຶກສາດ້ານການເງິນ ແລະ ການຊຸກຍູ້ໂຄງການ
投行业务强化与项目推进

ອີງຕາມການເຕີບໂຕຂອງວຽກງານທີ່ປຶກສາດ້ານການເງິນ ບລຈ ຈະຈັດສັນເພີ່ມຈຳນວນພະນັກງານໃຫ້ມີຄວາມເໝາະສົມ. ໂດຍເນັ້ນໃສ່ການຮັບປະກັນການດຳເນີນວຽກງານທີ່ປຶກສາທາງດ້ານການເງິນສຳລັບໂຄງການ IPO ຂອງ ທະນາຄານ ເພື່ອການລົງທຶນ ແລະ ການຄ້າ (BIC), ບໍລິສັດ ຍອດງຶ່ມ ພາວເວີ ຈຳກັດ, ລວມທັງໂຄງການອອກພັນທະບັດສີຂຽວຂອງບໍລິສັດ LOCA, ໂດຍຮັບໜ້າທີ່ເປັນທີ່ປຶກສາຮ່ວມ ແລະ ຕົວແທນຈຳໜ່າຍ. ພ້ອມກັນນັ້ນ, ຈະສືບຕໍ່ຕິດຕາມ ໂຄງການທີ່ປຶກສາທາງດ້ານການເງິນສຳລັບໂຄງການ IPO ຂອງທະນາຄານລາວ–ຈີນ. ນອກຈາກນັ້ນ, ຈະຊຸກຍູ້ການດຳເນີນການຕາມສັນຍາໂອນຮຸ້ນຂອງ ກຸ່ມບໍລິສັດວັດທະນະທຳ–ທ່ອງທ່ຽວລາວ ມະຫາຊົນ ເພື່ອໃຫ້ສາມາດຮັບເງິນຄ່າໂອນຮຸ້ນ ແລະ ດຳເນີນການໂອນຮຸ້ນໃຫ້ສຳເລັດພາຍໃນໄຕມາດ 2 ປີ 2026.

根据投行业务增长情况，合理增加投行业务人员配置。重点保障商业和投资银行（BIC）、略乌电力有限公司 IPO 财务顾问业务，以及 LOCA 网约车公司绿色债发行联合财务顾问和代销工作。继续跟进老-中银行 IPO 财务顾问项目。推动老挝文旅集团股权转让协议落实，争取在 2026 年 2 季度完成股权转让资金的实收和转股工作。

ປີ2025 ເປັນປີທີ່ມີຄວາມສຳຄັນຢ່າງຍິ່ງໃນປະຫວັດການພັດທະນາຂອງບໍລິສັດ. ການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບໄດ້ເພີ່ມກຳລັງໃໝ່ໃນການຂັບເຄື່ອນ ແລະ ໂອກາດໃນການພັດທະນາໃຫ້ແກ່ບໍລິສັດ. ໃນປີ 2026 ບໍລິສັດຍັງຄົງຍຶດຫຼັກການການບໍລິຫານຢ່າງຮອບຄອບ ແລະ ການພັດທະນາດ້ວຍນະວັດຕະກຳໃໝ່, ເນັ້ນໃສ່ທຸລະກິດຫຼັກ, ເສີມສ້າງລະບົບຄວບຄຸມພາຍໃນ, ຂະຫຍາຍການຮ່ວມມື ແລະ ສູ້ຊົນສ້າງມູນຄ່າສູງສຸດໃຫ້ແກ່ບໍລິສັດ ເພື່ອສ້າງຜົນຕອບແທນທີ່ດີຍິ່ງໃຫ້ແກ່ຜູ້ຖືຮຸ້ນ.

2025 年是公司发展史上浓墨重彩的一笔。上市为公司注入了新的活力和发展机遇。展望 2026 年，我们将继续秉持稳健经营、创新发展的理念，聚焦主业，强化内控，深化合作，努力实现公司价值的最大化，为股东创造更丰厚的回报。

ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2026.

特提交股东会审议上述老-中证券 2025 年度工作报告暨 2026 年度经营计划。

ໝາຍເຫດ: ອັດຕາແລກປ່ຽນແມ່ນອີງຕາມ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ໃນວັນທີ 31 ທັນວາ 2025 1 ຢວນເທົ່າກັບ 3,100.00 ກີບ, 1 ໂດລາສະຫາລັດເທົ່າກັບ 21,709.00 ກີບ.

注：本文汇率根据老挝外贸银行 2025 年 12 月 31 日外汇牌价 1 元=3,100.00 基普，1 美元=21,709.00 基普。

ພິຈາລະນາ ແລະ ຮັບຮອງ ວ່າຈ້າງ ບໍລິສັດ ເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບ ບັນຊີພາຍນອກຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

审议聘请安永老挝有限公司担任老-中证券公众公司审计机构

- ອີງຕາມກົດໝາຍວ່າດ້ວຍ ຫຼັກຊັບ (ສະບັບປັບປຸງ), ເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
  根据 2019 年 12 月 3 日国会颁布的第 79 号《证券法（修正案）》；
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ), ເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
  根据 2024 年 12 月 11 日证券管理委员会签发的第 15 号《发行人及上市公司信息报告与信息披露的决定（修正案）》；
- ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ), ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022.
  根据 2022 年 12 月 29 日国会颁布的第 33 号《企业法（修正案）》。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຫຼັງຈາກຫັນເປັນບໍລິສັດ ຈົດທະບຽນແລ້ວມີພັນທະຕ້ອງ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ເຊິ່ງການລາຍງານເອກະສານລາຍງານການເງິນ ຕ້ອງໄດ້ຮັບການ ກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ແລະ ຕ້ອງໄດ້ຮັບການຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ.

老-中证券公众公司（老-中证券）在股改为上市公司后，依法承担严格履行相关法律的义务，其中财务报告文件须经由受证券管理委员会（证管委）认可的会计师事务所进行审计，并提交股东会审议批准。

ບໍລິສັດ ເອີນແອນຢັງລາວ ຈຳກັດ (EY) ເປັນຜູ້ກວດສອບບັນຊີພາຍນອກ ທີ່ໄດ້ຮັບການຮັບຮອງໂດຍ ຄຄຊ. ບລຈ ຂໍສະເໜີການແຕ່ງຕັ້ງບໍລິສັດ EY ເປັນຜູ້ກວດສອບບັນຊີພາຍນອກຂອງ ບລຈ ສຳລັບປີ 2026, ເນື່ອງ ຈາກວ່າໄລຍະຜ່ານມາ ບໍລິສັດ EY ມີຜົນງານທີ່ໂດດເດັ່ນໃນການໃຫ້ບໍລິການກວດສອບແກ່ບໍລິສັດ, ບລຈ ເຫັນວ່າ ໃນຖານະຜູ້ກວດສອບບັນຊີພາຍນອກ ບໍລິສັດ EY ສະແດງອອກເຖິງຄວາມເປັນມືອາຊີບ, ຄຸໝັ່ນຂະຫຍັນພຽນ ແລະ ເອົາໃຈໃສ່ໃນໜ້າທີ່ໃນການທົບທວນ ແລະ ກວດສອບບັນຊີຂອງບໍລິສັດ, ໂດຍໄດ້ກຳນົດຄ່າບໍລິການກວດ ສອບສຳລັບປີ 2026 ຄືກັນກັບ ປີ 2025 ໃນມູນຄ່າ 11,000 ໂດລາ/ປີ.

安永老挝有限公司（EY）为经证管委认可的外部财务审计机构。老-中证券提议聘请 EY 担任 2026 年度审计机构。鉴于 EY 在前期为公司提供审计服务过程中表现专业、勤勉尽责，且其在审阅与审计公司账目方面具备高度的细致与专业性，2026 年度审计服务费与 2025 年保持一致，金额为 11,000 美元/年。

ດັ່ງນັ້ນ, ຈຶ່ງສະເໜີມາຍັງ ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງການວ່າຈ້າງ ບໍລິສັດ EY ບົນພື້ນຖານສຳເລັດບົດລາຍງານການກວດສອບບັນຊີ ບລຈ ປະຈຳປີ 2025 ແລ້ວ ສືບຕໍ່ເປັນຜູ້ກວດສອບບັນຊີພາຍນອກ ປະຈຳປີ 2026 ຂອງ ບລຈ.

因此，提请股东会审议聘请 EY 在完成好老-中证券 2025 年度审计报告的基础上，继续担任老-中证券 2026 年度审计机构。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 – 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານຂອງນັກກວດສອບອິດສະຫຼະ	4 – 6
ໃບລາຍງານຖານະການເງິນ	7 – 8
ໃບລາຍງານຜົນການດຳເນີນງານ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	10
ໃບລາຍງານກະແສເງິນສົດ	11 – 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 – 29

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກິດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການ ຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013 ແລະ ໃບທະບຽນວິສາຫະກິດສະບັບປັບປຸງສະບັບເລກທີ 0010/ຈຫວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 22 ເມສາ 2025 ແລະ ໃບອະນຸຍາດດຳເນີນ ທຸລະກິດ ສະບັບເລກທີ 06/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 4 ກໍລະກົດ 2025. ໃນວັນທີ 17 ມີນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 111,111,200 ຮຸ້ນ ໃນມູນ ຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

